ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ: 0471 /ອຄ

ນະຄອນຫຼວງວຽງຈັນ, ວັນທີ 09 MAR 2011

# ຂໍ້ຕົກລົງ
## ວ່າດ້ວຍ
## ໜ່ວຍງານແຈ້ງຂໍ້ມູນດ້ານສຸຂານາໄມ-ສຸຂານາໄມພືດ ແລະ ສິ່ງກີດຂວາງດ້ານເຕັກນິກຕໍ່ການຄ້າ

- ອີງຕາມດຳລັດວ່າດ້ວຍການສ້າງຕັ້ງ ແລະ ການເຄື່ອນໄຫວຂອງກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 188/ນຍ, ລົງວັນທີ 17 ສິງຫາ 2006;
- ອີງຕາມດຳລັດວ່າດ້ວຍການແຈ້ງ ແລະ ການສະໜອງຂໍ້ມູນທີ່ຕິດພັນກັບການຄ້າ ສະບັບເລກທີ 363/ນຍ, ລົງວັນທີ 19 ສິງຫາ 2010; ແລະ
- ອີງຕາມ ໜັງສືສະເໜີຂອງກົມນະໂຍບາຍການຄ້າຕ່າງປະເທດ ສະບັບເລກທີ 0317/ນຄຕ, ລົງວັນທີ 3 ມີນາ 2011.

**ລັດຖະມົນຕີວ່າການ ກະຊວງອຸດສາຫະກຳ ແລະ ການຄ້າ ອອກຂໍ້ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດກ່ຽວກັບການຈັດຕັ້ງ ແລະ ການເຄື່ອນໄຫວຂອງ **ໜ່ວຍງານແຈ້ງຂໍ້ມູນດ້ານສຸຂານາໄມ-ສຸຂານາໄມພືດ ແລະ ສິ່ງກີດຂວາງດ້ານເຕັກນິກຕໍ່ການຄ້າ** (ຕໍ່ໄປນີ້ ເອີ້ນວ່າ "**ໜ່ວຍງານແຈ້ງຂໍ້ມູນ**" ຫຼື ໃນພາສາອັງກິດ ແມ່ນ SPS-TBT Notification Unit) ເພື່ອຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດດຳລັດວ່າດ້ວຍການແຈ້ງ ແລະ ການສະໜອງຂໍ້ມູນທີ່ຕິດພັນກັບການຄ້າ ສະບັບເລກທີ 363/ນຍ, ລົງວັນທີ 19 ສິງຫາ 2010 (ຕໍ່ໄປນີ້ ເອີ້ນວ່າ "**ດຳລັດ 363**").

**ມາດຕາ 2. ການອະທິບາຍຄຳສັບ**

ໃນຂໍ້ຕົກລົງສະບັບນີ້, ຄຳສັບຕໍ່ໄປນີ້ມີຄວາມໝາຍ ດັ່ງນີ້:

1. **ຂໍ້ມູນດ້ານສຸຂານາໄມ-ສຸຂານາໄມພືດ ແລະ ສິ່ງກີດຂວາງດ້ານເຕັກນິກຕໍ່ການຄ້າ ຫຼື ຂໍ້ມູນ** ໝາຍເຖິງຂໍ້ມູນກ່ຽວກັບການຮ່າງ, ການປັບປຸງ ຫຼືການອອກໃໝ່ ມາດຕະການດ້ານສຸຂານາໄມ-ສຸຂານາໄມພືດ (ຊຶ່ງໃນພາສາອັງກິດແມ່ນ Sanitary and Phytosanitary Measures ຫຼືຂຽນຫຍໍ້ແມ່ນ SPS) ຫຼື ນິຕິກຳທີ່ເປັນສິ່ງກີດຂວາງດ້ານເຕັກນິກຕໍ່ການຄ້າ (ຊຶ່ງໃນພາສາອັງກິດແມ່ນ Technical Barriers to Trade ຫຼື ຂຽນຫຍໍ້ແມ່ນ TBT) ຫຼື ຂໍ້ມູນກ່ຽວກັບການເຂົ້າເປັນພາຄີ ຂອງສປປ ລາວ ໃນ ສັນຍາ ຫຼື ສົນທິສັນຍາທີ່ຕິດພັນກັບ SPS ຫຼື TBT;
2. **ອົງການຈັດຕັ້ງສາກົນ** ໝາຍເຖິງ ບັນດາອົງການຈັດຕັ້ງສາກົນ ລວມທັງອົງການການຄ້າໂລກ, ອົງການຈັດຕັ້ງພາກພື້ນທີ່ສປປ ລາວ ມີພັນທະໃນການແຈ້ງຂໍ້ມູນ;
3. **ການແຈ້ງຂໍ້ມູນ** ໝາຍເຖິງ ການແຈ້ງຂໍ້ມູນໂດຍອົງການຈັດຕັ້ງສາກົນມາຍັງ ສປປ ລາວ (ຂໍ້ມູນຂາເຂົ້າ) ຫຼື ໂດຍ ສປປ ລາວ ໄປຍັງອົງການຈັດຕັ້ງສາກົນ (ຂໍ້ມູນຂາອອກ);
4. **ຈຸດສອບຖາມ** ໝາຍເຖິງ ຈຸດສະໜອງຂໍ້ມູນດ້ານສຸຂານາໄມ ແລະ ສຸຂານາໄມພືດ (ຢູ່ ກະຊວງກະສິກຳ ແລະ ປ່າໄມ້) ແລະ ຈຸດສະໜອງຂໍ້ມູນດ້ານນິຕິກຳທີ່ເປັນສິ່ງກີດຂວາງດ້ານເຕັກນິກຕໍ່ການຄ້າ (ຢູ່ ອົງການວິທະຍາສາດ ແລະ ເຕັກໂນໂລຊີແຫ່ງຊາດ) ຊຶ່ງມີໜ້າທີ່ສະໜອງຂໍ້ມູນຕາມການຮ້ອງຂໍ ຂອງບຸກຄົນ ຫຼືອົງການຈັດຕັ້ງ ຕາມທີ່ກຳນົດໄວ້ໃນມາດຕາ 5 ວັກ 1 ແລະ ວັກ 2 ຂອງດຳລັດ 363;
5. **ຈຸດປະສານງານ** ໝາຍເຖິງ ຈຸດປະສານງານທີ່ສ້າງຂຶ້ນ ໃນຂະແໜງການທີ່ກ່ຽວຂ້ອງ ເພື່ອປະສານງານໃນການແຈ້ງຂໍ້ມູນຕາມທີ່ໄດ້ກຳນົດ ໄວ້ໃນຂໍ້ຕົກລົງສະບັບນີ້; ແລະ
6. **ພາກສ່ວນທີ່ກ່ຽວຂ້ອງ** ໝາຍເຖິງ ອົງການຈັດຕັ້ງສາກົນ, ຈຸດສອບຖາມ ແລະ ຈຸດປະສານງານ.

## ໝວດທີ 2
## ທີ່ຕັ້ງ, ພາລະບົດບາດ ແລະ ໂຄງປະກອບບຸກຄະລາກອນ

**ມາດຕາ 3. ທີ່ຕັ້ງ ແລະ ພາລະບົດບາດ**

ໜ່ວຍງານແຈ້ງຂໍ້ມູນ ມີທີ່ຕັ້ງຢູ່ກົມນະໂຍບາຍການຄ້າຕ່າງປະເທດ, ກະຊວງອຸດສາຫະກຳ ແລະ ການຄ້າ ແລະ ມີພາລະບົດບາດໃນການປະຕິບັດໜ້າທີ່ໃນນາມ ຂອງກະຊວງອຸດສາຫະກຳ ແລະ ການຄ້າ ຕາມທີ່ໄດ້ກຳນົດໄວ້ ໃນມາດຕາ 4 ຂອງ ດຳລັດ 363.

**ມາດຕາ 4. ໂຄງປະກອບບຸກຄະລາກອນ**

ໜ່ວຍງານແຈ້ງຂໍ້ມູນປະກອບດ້ວຍບຸກຄະລາກອນຈຳນວນໜຶ່ງ.

ມອບໃຫ້ກົມນະໂຍບາຍການຄ້າຕ່າງປະເທດ ເປັນຜູ້ແຕ່ງຕັ້ງບຸກຄະລາກອນ ແລະ ຂໍ້ມູນການຕິດຕໍ່ຂອງໜ່ວຍງານດັ່ງກ່າວ ແລະ ແຈ້ງໃຫ້ແກ່ພາກສ່ວນທີ່ກ່ຽວຂ້ອງຊາບ.

## ໝວດທີ 3
## ສິດ ແລະ ໜ້າທີ່

**ມາດຕາ 5 ສິດ**

ໜ່ວຍງານແຈ້ງຂໍ້ມູນ ມີສິດ ດັ່ງນີ້:

1. ດຳເນີນການແຈ້ງຂໍ້ມູນຂາອອກ ແລະ ຮັບການແຈ້ງຂໍ້ມູນຂາເຂົ້າໂດຍກົງ;
2. ປະສານງານໂດຍກົງກັບພາກສ່ວນທີ່ກ່ຽວຂ້ອງ ໃນການແຈ້ງຂໍ້ມູນ ແລະ ໃນການຕິດຕາມການປ່ຽນແປງຂໍ້ມູນ;
3. ເຂົ້າຮ່ວມ ຫຼື ຈັດກອງປະຊຸມ, ສຳມະນາ ແລະ ຝຶກອົບຮົມຕ່າງໆ ທີ່ກ່ຽວກັບການແຈ້ງຂໍ້ມູນ; ແລະ
4. ປະຕິບັດສິດອື່ນໆ ຕາມການມອບໝາຍຂອງຂັ້ນເທິງ.

**ມາດຕາ 6 ໜ້າທີ່**

ໜ່ວຍງານແຈ້ງຂໍ້ມູນ ມີໜ້າທີ່ ດັ່ງນີ້:

1. ຕິດຕາມ, ສັງລວມ ແລະ ແຈ້ງຂໍ້ມູນໃຫ້ສຳເລັດຕາມຫຼັກການພື້ນຖານທີ່ກຳນົດໃນມາດຕາ 3 ຂອງດຳລັດ 363;
2. ປະສານງານການປະກອບຄຳເຫັນຂອງພາກສ່ວນທີ່ກ່ຽວຂ້ອງຕໍ່ຂໍ້ມູນຂາເຂົ້າ ແລະ ຂໍ້ມູນຂາອອກ ຢ່າງທັນກັບກຳນົດເວລາ;
3. ສ້າງ ແລະ ປັບປຸງຖານຂໍ້ມູນໃຫ້ເປັນລະບົບ;
4. ຈັດຝຶກອົບຮົມວຽກງານປະສານງານການແຈ້ງຂໍ້ມູນ ໃຫ້ແກ່ຈຸດປະສານງານ;
5. ຄົ້ນຄ້ວາ ແລະ ສະເໜີປັບປຸງກົນໄກການປະສານງານ ແລະ ດ້ານອື່ນໆຂອງໜ່ວຍງານແຈ້ງຂໍ້ມູນ ໃຫ້ມີປະສິດທິຜົນດີຂຶ້ນ;
6. ລາຍງານເປັນປະຈຳ ໃຫ້ຄະນະນຳກະຊວງອຸດສາຫະກຳ ແລະ ການຄ້າ ກ່ຽວກັບການເຄື່ອນໄຫວຂອງ ໜ່ວຍງານແຈ້ງຂໍ້ມູນ; ແລະ
7. ປະຕິບັດໜ້າທີ່ອື່ນໆ ຕາມການມອບໝາຍຂອງຂັ້ນເທິງ.

## ພາກທີ 4
## ລະບອບແບບແຜນວິທີເຮັດວຽກ, ງົບປະມານ ແລະ ກາປະທັບ

**ມາດຕາ 7. ລະບອບແບບແຜນວິທີເຮັດວຽກ**

ໃຫ້ພ່ອຍງານແຈ້ງຂໍ້ມູນກຳນົດແບບແຜນວິທີເຮັດວຽກທີ່ເໝາະສົມໂດຍໃນນັ້ນຕ້ອງປະຕິບັດດັ່ງນີ້:

1. ສ້າງ ແລະ ຮັກສາລະບົບຖານຂໍ້ມູນທາງເອເລັກໂຕຼນິກ ເພື່ອຮັບໃຊ້ວຽກງານການແຈ້ງຂໍ້ມູນ;
2. ສ້າງຄູ່ມືປະຕິບັດການແຈ້ງຂໍ້ມູນເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດ;
3. ກຳນົດແຜນຝຶກອົບຮົມເປັນແຕ່ລະໄລຍະ ໃຫ້ແກ່ຈຸດປະສານງານກ່ຽວກັບວິທີປະສານງານການແຈ້ງຂໍ້ມູນ; ແລະ
4. ມີການປະຊຸມຢ່າງໜ້ອຍສອງຄັ້ງຕໍ່ປີ ຫຼື ຕາມການສະເໜີຂອງຈຸດປະສານງານໃດໜຶ່ງ.

**ມາດຕາ 8. ງົບປະມານ**

ງົບປະມານຂອງພ່ອຍງານແຈ້ງຂໍ້ມູນແມ່ນໃຫ້ລວມຢູ່ໃນງົບປະມານຂອງກົມນະໂຍບາຍການຄ້າຕ່າງປະເທດ.

**ມາດຕາ 9. ກາປະທັບ**

ໃຫ້ພ່ອຍງານແຈ້ງຂໍ້ມູນນຳໃຊ້ກາປະທັບຂອງກົມນະໂຍບາຍການຄ້າຕ່າງປະເທດໃນການເຄື່ອນໄຫວວຽກງານຂອງຕົນ.

## ພາກທີ 5
## ການປະສານງານ

**ມາດຕາ 10. ຈຸດປະສານງານໃນຂະແໜງອຸດສາຫະກຳ ແລະ ການຄ້າ**

ໃຫ້ພະແນກອຸດສາຫະກຳ ແລະ ການຄ້ານະຄອນຫຼວງ ແລະ ແຂວງ ແຕ່ງຕັ້ງຈຸດປະສານງານຂອງຕົນ ເພື່ອປະຕິບັດໜ້າທີ່ຕາມທີ່ໄດ້ກຳນົດໄວ້ໃນວັກສອງຂອງມາດຕານີ້ ແລະ ແຈ້ງການແຕ່ງຕັ້ງດັ່ງກ່າວເປັນລາຍລັກອັກສອນໃຫ້ແກ່ພ່ອຍງານແຈ້ງຂໍ້ມູນພາຍໃນສາມສິບ (30) ວັນ ນັບແຕ່ວັນທີ່ຂໍ້ຕົກລົງສະບັບນີ້ມີຜົນສັກສິດເປັນຕົ້ນໄປ.

ຈຸດປະສານງານຂອງພະແນກອຸດສາຫະກຳ ແລະ ການຄ້າ ມີໜ້າທີ່ ດັ່ງນີ້:

1. ເປັນຈຸດປະສານງານ ລະຫວ່າງ ພ່ອຍງານແຈ້ງຂໍ້ມູນ ແລະ ພາກສ່ວນຕ່າງໆຂັ້ນທ້ອງຖິ່ນ ໂດຍແຈກຢາຍຂໍ້ມູນທີ່ໄດ້ຮັບຈາກພ່ອຍງານແຈ້ງຂໍ້ມູນ ໄປຍັງພາກ

ສ່ວນດັ່ງກ່າວ ພາຍໃນກຳນົດເວລາທີ່ກຳນົດ ໂດຍໜ່ວຍງານແຈ້ງຂໍ້ມູນ;

2. ຕິດຕາມການປ່ຽນແປງຂໍ້ມູນ ພາຍໃນທ້ອງຖິ່ນຂອງຕົນ ແລະ ລາຍງານການປ່ຽນແປງດັ່ງກ່າວໃຫ້ໜ່ວຍງານແຈ້ງຂໍ້ມູນໃນທັນທີ;
3. ອຳນວຍຄວາມສະດວກອື່ນໆໃຫ້ແກ່ໜ່ວຍງານແຈ້ງຂໍ້ມູນ ທີ່ຈຳເປັນເພື່ອປະຕິບັດການແຈ້ງຂໍ້ມູນໃຫ້ສຳເລັດ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້;
4. ລາຍງານສະພາບການປະຕິບັດໜ້າທີ່ຂອງຕົນຕາມການຮ້ອງຂໍຂອງໜ່ວຍງານແຈ້ງຂໍ້ມູນ; ແລະ
5. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມການມອບໝາຍຂອງໜ່ວຍງານແຈ້ງຂໍ້ມູນ.

**ມາດຕາ 11. ຈຸດປະສານງານໃນຂະແໜງການອື່ນ**

ຂະແໜງການອື່ນທີ່ຕ້ອງມີຈຸດປະສານງານໃນການຮັບ ແລະ ການສະໜອງຂໍ້ມູນດ້ານສຸຂານາໄມ ແລະ ສຸຂານາໄມພືດ ໃຫ້ແກ່ໜ່ວຍງານແຈ້ງຂໍ້ມູນ ປະກອບມີ:

1. ຂະແໜງກະສິກຳ ແລະ ປ່າໄມ້;
2. ຂະແໜງສາທາລະນະສຸກ;
3. ຂະແໜງຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ;
4. ຂະແໜງວິທະຍາສາດ ແລະ ເຕັກໂນໂລຊີ; ແລະ
5. ຂະແໜງການອື່ນໆທີ່ກ່ຽວຂ້ອງ.

ຂະແໜງການອື່ນທີ່ຕ້ອງມີຈຸດປະສານງານໃນການຮັບ ແລະ ການສະໜອງຂໍ້ມູນດ້ານສິ່ງກີດຂວາງດ້ານເຕັກນິກຕໍ່ການຄ້າ ໃຫ້ແກ່ໜ່ວຍງານແຈ້ງຂໍ້ມູນ ປະກອບມີ:

1. ຂະແໜງວິທະຍາສາດ ແລະ ເຕັກໂນໂລຊີ;
2. ຂະແໜງຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ;
3. ຂະແໜງກະສິກຳ ແລະ ປ່າໄມ້;
4. ຂະແໜງພະລັງງານ ແລະ ບໍ່ແຮ່;
5. ຂະແໜງໂຍທາທິການ ແລະ ຂົນສົ່ງ;
6. ຂະແໜງໄປສະນີ ແລະ ໂທລະຄົມມະນາຄົມ;
7. ຂະແໜງຖະແຫຼງຂ່າວ ແລະ ວັດທະນະທຳ;
8. ຂະແໜງສາທາລະນະສຸກ;
9. ຂະແໜງປ້ອງກັນຄວາມສະຫງົບ; ແລະ
10. ຂະແໜງການອື່ນໆທີ່ກ່ຽວຂ້ອງ.

ສຳລັບພາກທຸລະກິດ, ແມ່ນໃຫ້ ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ເປັນຈຸດປະສານງານ ລະຫວ່າງ ໜ່ວຍງານແຈ້ງຂໍ້ມູນ ແລະ ຫົວໜ່ວຍທຸລະກິດຕ່າງໆ.

ໃຫ້ໜ່ວຍງານແຈ້ງຂໍ້ມູນປະສານສົມທົບ ກັບຂະແໜງການກ່ຽວຂ້ອງເພື່ອແຕ່ງຕັ້ງຈຸດປະສານງານ ຕາມຄວາມເໝາະສົມ.

**ມາດຕາ 12. ການປະສານງານການແຈ້ງຂໍ້ມູນຂາເຂົ້າ**

ໃນກໍລະນີທີ່ໄດ້ຮັບຂໍ້ມູນຂາເຂົ້າ, ໜ່ວຍງານແຈ້ງຂໍ້ມູນຕ້ອງແຈກຢາຍຂໍ້ມູນດັ່ງກ່າວ ໃຫ້ຈຸດປະສານງານທີ່ກ່ຽວຂ້ອງ ຢ່າງຊ້າບໍ່ໃຫ້ກາຍ ຫ້າ (5) ວັນລັດຖະການ ນັບແຕ່ວັນທີ່ໄດ້ຮັບຂໍ້ມູນດັ່ງກ່າວ ເພື່ອຂໍຄໍາເຫັນ ໂດຍກໍານົດໄລຍະເວລາທີ່ຈຸດປະສານງານດັ່ງກ່າວ ສາມາດສົ່ງຄໍາເຫັນ ໃຫ້ຄືນ.

ໜ່ວຍງານແຈ້ງຂໍ້ມູນຕ້ອງຕິດຕາມ ແລະ ສັງລວມຄໍາເຫັນທີ່ໄດ້ຮັບແລ້ວສົ່ງໃຫ້ອົງການຈັດຕັ້ງສາກົນທີ່ກ່ຽວຂ້ອງ ຕາມກໍານົດເວລາ.

**ມາດຕາ 13. ການປະສານງານການແຈ້ງຂໍ້ມູນຂາອອກ**

ໜ່ວຍງານແຈ້ງຂໍ້ມູນ ຕ້ອງປະສານງານ ກັບຈຸດປະສານງານທີ່ກ່ຽວຂ້ອງ ເພື່ອປະຕິບັດການແຈ້ງຂໍ້ມູນຂາອອກ ໃຫ້ສອດຄ່ອງກັບບັນດາຫຼັກການພື້ນຖານທີ່ກໍານົດໄວ້ໃນ ມາດຕາ 3 ຂອງ ດໍາລັດ 363.

ໃນກໍລະນີທີ່ໄດ້ຮັບຄໍາເຫັນຈາກອົງການຈັດຕັ້ງສາກົນຕໍ່ຂໍ້ມູນຂາອອກ, ໜ່ວຍງານແຈ້ງຂໍ້ມູນຕ້ອງສັງລວມຄໍາເຫັນດັ່ງກ່າວ ແລ້ວສົ່ງໄປຍັງ ຈຸດປະສານງານທີ່ກ່ຽວຂ້ອງ ຢ່າງຊ້າບໍ່ໃຫ້ກາຍ ຫ້າ (5) ວັນລັດຖະການ ນັບແຕ່ມື້ທີ່ໄດ້ຮັບຄໍາເຫັນເປັນຕົ້ນໄປ.

**ມາດຕາ 14. ການປະສານງານກັບຈຸດສອບຖາມ**

ໜ່ວຍງານແຈ້ງຂໍ້ມູນຕ້ອງປະສານງານ ກັບຈຸດສອບຖາມ ໂດຍກົງ ແລະ ເປັນປະຈໍາເພື່ອແລກປ່ຽນຂໍ້ມູນ ແລະ ເພື່ອຫຼີກເວັ້ນການເຮັດວຽກແບບຊໍ້າຊ້ອນ ລະຫວ່າງ ໜ່ວຍງານແຈ້ງຂໍ້ມູນ ແລະ ຈຸດສອບຖາມໃນການປະສານງານກັບຈຸດປະສານງານອື່ນ.

## ໝວດທີ 6
## ບົດບັນຍັດສຸດທ້າຍ

**ມາດຕາ 15. ການຈັດຕັ້ງປະຕິບັດ**

ໃຫ້ກົມນະໂຍບາຍການຄ້າຕ່າງປະເທດເປັນເຈົ້າການໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້. ໃຫ້ທຸກພາກສ່ວນພາຍໃນຂະແໜງອຸດສາຫະກໍາ ແລະ ການຄ້າອໍານວຍຄວາມສະດວກທຸກຢ່າງຕາມການຮ້ອງຂໍຂອງໜ່ວຍງານແຈ້ງຂໍ້ມູນເພື່ອຈັດຕັ້ງປະຕິບັດການແຈ້ງຂໍ້ມູນ.

ຂະແໜງການອື່ນຈົ່ງຮັບຊາບ, ແຕ່ງຕັ້ງຈຸດປະສານງານ ຂອງຕົນ ແລະ ໃຫ້ຄວາມຮ່ວມມື ຕາມຄວາມເໝາະສົມ ແລະ ບົນພື້ນຖານ ຂອງດຳລັດ 363.

**ມາດຕາ 16. ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີ ວ່າການ ກະຊວງອຸດສາຫະກຳ ແລະ ການຄ້າ

ດຣ. ນາມ ວິຍະເກດ